

# ຂ້າພະເຈົ້າສະຫຼອງບຸນໄຫວ້ພະຈັນຢູ່ຈີນ

ມື້ເພັງເດືອນ 8 ຕາມຈັນທະຄະຕິຈີນຂອງທຸກປີ ແມ່ນບຸນໄຫວ້ພະຈັນ ທີ່ເປັນບຸນປະເພນີຂອງຈີນ. ບຸນໄຫວ້ພະຈັນ ກໍເອີ້ນວ່າ: ເປັນບຸນດວງຈັນ ຫຼື ບຸນສາມັກຄີ ຊຶ່ງມີຄວາມມຸ່ງມາດປາຖະໜາໃຫ້ຄວາມສາມັກຄີ ແລະ ຄວາມຈີບງາມຂອງຊາວຈີນ. ບຸນໄຫວ້ພະຈັນປີນີ້ ພໍດີກົງກັບວັນທີ 17 ກັນຍາຕາມປະຕິທິນສາກົນ, ເນື່ອງໃນໂອກາດບຸນໄຫວ້ພະຈັນ ໄດ້ໝູນວຽນມາເຖິງ, ຊາວໜຸ່ມຕ່າງປະເທດທີ່ຢູ່ຈີນ ໄດ້ສຳຜັດກັບວັດທະນະທຳທີ່ເປັນມູນເຊື້ອຂອງຈີນ ພ້ອມທັງໄດ້ຮັບຮູ້ເຖິງຄວາມສາມັກຄີ ແລະ ຄວາມອົບອຸ່ນຢູ່ຈີນເຊັ່ນດຽວກັນ.

## ເຮັດເຂົ້າໜົມໄຫວ້ພະຈັນ ທັງງາມທັງແຊບ

ເຮັດໜັງ, ຫໍ່ໄສ້, ປັ້ນເປັນກ້ອນ, ບີບເປັນລວດລາຍງາມຕາ. ຫວ່າງມໍ່ໆມານີ້, ນັກສຶກສາຕ່າງປະເທດ ທີ່ຮຽນຢູ່ມະຫາວິທະຍາໄລພາກຕາເວັນຕົກສ່ຽງໃຕ້ຂອງຈີນ ທີ່ຕັ້ງຢູ່ນະຄອນຈຶ່ງກິ້ງ ໄດ້ເຮັດເຂົ້າໜົມໄຫວ້ພະຈັນດ້ວຍຕົນເອງ ໂດຍພາຍໃຕ້ການຊີ້ນຳຂອງຊ່ຽວຊານວິຊາການດ້ານເຂົ້າໜົມ. ຂະໜົມໄຫວ້ພະຈັນເຮັດສຳເລັດແລ້ວ, ທັງງາມທັງຫອມ.

ໃນມື້ບຸນໄຫວ້ພະຈັນ, ການກິນເຂົ້າໜົມໄຫວ້ພະຈັນ ເປັນໜຶ່ງໃນຮີດຄອງປະເພນີທີ່ມີມູນເຊື້ອອັນຍາວນານຂອງຈີນ. ເຂົ້າໜົມໄຫວ້ພະຈັນ ທີ່ເປັນຮູບວົງມົນ ເໝືອນດັ່ງດວງເດືອນເຕັມດວງເທິງຟ້າ. ນັບແຕ່ບູຮານນະການເປັນຕົ້ນມາ, ຊາວຈີນ ກໍຖືເອົາເຂົ້າໜົມໄຫວ້ພະຈັນ ເປັນສັນຍາລັກ ໃຫ້ແກ່ຄວາມສິລິມຸງຄຸນ ແລະ ຄວາມສາມັກຄີ. "ທ້າວ ສີຢີ້ ນັກສຶກສາຕ່າງປະເທດທີ່ຮຽນຂະແໜງວິຊາການສຶກສາ ສາກົນພາສາຈີນຂອງມະຫາວິທະຍາໄລພາກຕາເວັນຕົກສ່ຽງໃຕ້ຈີນ ກ່າວວ່າ: ນີ້ແມ່ນຂ້າພະເຈົ້າເຮັດເຂົ້າໜົມໄຫວ້ພະຈັນເປັນຄັ້ງທຳອິດ. ຂ້າພະເຈົ້າຮູ້ສຶກວ່າ: ມັນເປັນຕາແຊບ ແລະ ງາມອີ່ຫຼີ. ຂ້າພະເຈົ້າຫວັງວ່າ: ພໍ່ແມ່ຂ້າພະເຈົ້າຈະມີໂອກາດໄດ້ ຊີມເຂົ້າໜົມໄຫວ້ພະຈັນ ທີ່ຂ້າພະເຈົ້າເຮັດ.

ຢູ່ວິທະຍາໄລວິທະຍາສາດອິສຣາແອນ ແຂວງກວາງຕຸ້ງຈີນ, ທ່ານ ມາເຊໄລ ສາສະດາຈານພະແນກຟີຊິກສາດ ທີ່ມາຈາກອາກຊັງຕິນໄດ້ເຂົ້າຮ່ວມກິດຈະກຳສຳຜັດວັດທະນະທຳບຸນໄຫວ້ພະຈັນ ຂອງທາງມະຫາວິທະຍາໄລ. ທ່ານ ກ່າວວ່າ: "ຂ້ອຍມັກເຂົ້າຮ່ວມກິດຈະກຳແບບນີ້ຫຼາຍ, ພວກເຮົາຮຽນວິທີເຮັດເຂົ້າໜົມໄຫວ້ພະຈັນ ທີ່ເປັນມູນເຊື້ອຂອງເຂດເຕຈິວ ແລະ ຊິວທາວ, ຂ້ອຍມັກເຂົ້າໜົມໄຫວ້ພະຈັນຫຼາຍ."

ທ່ານ ກ່າວຕື່ມວ່າ: ຕົນມາຈີນໄດ້ 4 ປີແລ້ວ, ນີ້ແມ່ນເທື່ອທຳອິດທີ່ມີໂອກາດເຂົ້າຮ່ວມກິດຈະກຳເຮັດເຂົ້າໜົມໄຫວ້ພະຈັນ, ຕົນມັກວັດທະນະທຳຈີນ ແລະ ວັດທະນະທຳເຕຈິວ ແລະ ຊາວທາວຫຼາຍ.

ຢູ່ຈີນ, ເຂົ້າໜົມໄຫວ້ພະຈັນມີແບບກວາງຕຸ້ງ, ແບບຈ່ຽງຊູ, ແບບປັກກິ່ງ, ແບບເຕຈິວ, ແບບຢຸນນານ ແລະ ແບບຮົງກົງ. ໃນໄລຍະບຸນໄຫວ້ພະຈັນ, ຢູ່ທ້ອງຖິ່ນຕ່າງໆຂອງຈີນ, ຊາວໜຸ່ມຕ່າງປະເທດທີ່ຢູ່ຈີນທັງໄດ້ຊີມເຂົ້າໜົມໄຫວ້ພະຈັນແບບຕ່າງໆ ທີ່ຕົນເຮັດ, ທັງໄດ້ຟັງສຽງດົນຕີພື້ນບູຮານຈີນ ແລະ ມອບຖົງຫອມນ້ອຍໃຫ້ກັນແລະກັນນຳອາຈານ ແລະ ໝູ່ເພື່ອນຈີນ ພ້ອມທັງຮັບຮູ້ວັດທະນະທຳບຸນໄຫວ້ພະຈັນ ແລະ ສິ່ງຄຳອວຍພອນໃນມື້ບຸນພ້ອມກັນ.

## ສຳຜັດກັບຮີດຄອງປະເພນີບຸນໄຫວ້ພະຈັນ ທັງມ່ວນທັງຄຶກຄັກ

ຫວ່າງມໍ່ໆມານີ້, ໃນກິດຈະກຳແລກປ່ຽນວັດທະນະທຳບຸນໄຫວ້ພະຈັນຊາວໜຸ່ມຈີນ ແລະ ຕ່າງປະເທດ ທີ່ຈັດຂຶ້ນຢູ່ນະຄອນຄຸນໝິງ ແຂວງຢຸນນານຈີນ, ທ່ານ ລິງເວີຍ ທີ່ເປັນຊາວໜຸ່ມຈາກມຽນມາ ໄດ້ຈັບເອົາເຈ້ຍຄຳທວາຍໃບໜຶ່ງ, ມັນໄດ້ຂຽນຄຳທວາຍໂຄມໄຟວ່າ: "ດອກໄມ້ຕ່າງໆຫ່ຽວແລ້ວມັນຈຶ່ງເບັ່ງບານ, ມັນຈະໄປເຖິງຄອບຄົວຕ່າງໆໃນໄລຍະບຸນໄຫວ້ພະຈັນ. ກີບດອກໄມ້ຄ້າຍຄືເສັ້ນຜົມກູດ, ມັນບໍ່ຢ້ານລົມເຢັນ ຝົນເຢັນ ຈັກເທື່ອ. ທ່ານ ລິງເວີຍ ໄດ້ທວາຍອອກມາໂລດ, ມັນແມ່ນດອກເກັກຮວຍ.

ມື້ດຽວກັນ, ມີນັກສຶກສາຕ່າງປະເທດ ທີ່ຮຽນຢູ່ແຂວງຢຸນນານ 80 ກວ່າຄົນຈາກລາວ, ຫວຽດນາມ, ມຽນມາ, ຣັດເຊຍ ແລະ ນິເຊຣີ ເປັນຕົ້ນ ໄດ້ເຂົ້າຮ່ວມກິດຈະກຳດັ່ງກ່າວ. ພວກເຂົາເຈົ້າໄດ້ເຂົ້າຮ່ວມກິດຈະກຳຕ່າງໆ ເຊັ່ນ: ແຕ້ມຮູບດ້ວຍນ້ຳຕານ, ແກວ່ງທະນູເຂົ້າເຕົ້ານ້ຳ, ຂຽນຕົວໜັງສືຈີນ, ແຕ້ມຮູບເທິງວີ ແລະ ທວາຍຄຳທວາຍ. ໃນນັ້ນ, ແຕ້ມຮູບເທິງວີ ທີ່ເປັນມໍລະດົກວັດທະນະທຳນາມມະທຳ ໄດ້ຮັບຄວາມນິຍົມຊົມຊອບຈາກຊາວໜຸ່ມທັງຫຼາຍ, ພວກເຂົາເຈົ້າໄດ້ຖືວີ ທີ່ຕົນສັ່ງຜະລິດອອກມາ, ເຊີນຊວນຜູ້ສືບທອດວັດທະນະທຳນາມມະທຳ ໄດ້ແຕ້ມຮູບ ແລະ ຍ້ອມສີຢູ່ຕາມວີຂອງຕົນ. ບໍ່ດົນ, ວີທີ່ມີລວດລາຍປານີດກໍໄດ້ "ກຳເນີດເກີດຂຶ້ນ" ແລ້ວ. ທ່ານ ລິງເວີຍ ກ່າວວ່າ: "ຈັ່ງແມ່ນເລື່ອງທີ່ອັດສະຈັນຫຼາຍ."

ຜູ້ທີ່ຕິດໃຈນຳຮີດຄອງປະເພນີບຸນໄຫວ້ພະຈັນ ຍັງມີ ທ້າວໄທເລີ ຊາວໜຸ່ມອາເມຣິກາ. ໃນງານສະເຫຼີມສະຫຼອງບຸນໄຫວ້ພະຈັນ ທີ່ຈັດຂຶ້ນຢູ່ນະຄອນກ້ານໂຈ່ວ ແຂວງຈ່ຽງຊີ ຈີນ, ລາວໄດ້ໃສ່ຊຸດບູຮານຈີນ ແລະ ສະແດງລາຍການຟ້ອນທີ່ພາດຫົວຂໍ້ວ່າ; "ຊົງສືອູຢຸ້ນ" ກັບເພື່ອນຂອງຕົນ. ລາວ ກ່າວວ່າ: ນີ້ເປັນປະສົບການທີ່ດີທີ່ສຸດ, ຂ້າພະເຈົ້າມັກເຂົ້າຮ່ວມກິດຈະກຳນຳໝູ່ເພື່ອນທີ່ມີຮີດຄອງປະເພນີ ວັດທະນະທຳ ທີ່ຕ່າງກັນ, ຄົນທັງຫຼາຍຢູ່ຮ່ວມກັນເໝືອນອ້າຍເອື້ອຍນ້ອງດຽວກັນ."

## ຮັບຮູ້ເຖິງ "ຄວາມສາມັກຄີ" ຢູ່ຕ່າງປະເທດ

ບຸນໄຫວ້ພະຈັນ ເປັນມື້ບຸນສາມັກຄີ, ກໍໄດ້ເຮັດໃຫ້ຊາວໜຸ່ມປະເທດຕ່າງໆຮັບຮູ້ເຖິງເລື່ອງກ່ຽວກັບຄວາມຊົງຈຳຂອງຄອບຄົວ ແລະ ເລື່ອງຄວາມຮັກ, ໃນບັນຍາກາດມື້ບຸນທີ່ເຂັ້ມຂຸ້ນ, ທຸກຄົນລ້ວນແຕ່ໄດ້ຮັບຮູ້ເຖິງເລື່ອງຄວາມຮັກແພງລະຫວ່າງໝູ່ເພື່ອນທີ່ຈິງໃຈ.

ພາຍຫຼັງ ໄດ້ສຳຜັດກັບສິມືຜະລິດຊາກ້ອນທີ່ມີປະຫວັດສາດມາເປັນເວລາຮ້ອຍປີ ທີ່ເປັນມໍລະດົກວັດທະນະທຳນາມມະທຳຂອງນະຄອນຕ້າຫຼີ ແລະ ວັດທະນະທຳຂົນສົ່ງຊາດ້ວຍມ້າຕ່າງໆທີ່ເຂັ້ມຂຸ້ນຂອງທ້ອງຖິ່ນນັ້ນແລ້ວ, ທ້າວ ລິນລາຍຊຽງ ນັກສຶກສາກຳປູເຈຍ ກ່າວວ່າ: ບຸນໄຫວ້ພະຈັນຂອງກຳປູເຈຍ ຄ້າຍຄືກັນກັບບຸນໄຫວ້ພະຈັນຈີນ, ສະມາຊິກຄອບຄົວກິນເຂົ້າໜົມໄຫວ້ພະຈັນ, ດື່ມຊາ, ເຮັດໂຄມໄຟ ແລະ ຊົມໂຄມໄຟນຳກັນ, ມີຄວາມສຸກ ແລະ ຄວາມມ່ວນຊື່ນຫຼາຍ.

ນັກສຶກສາຍິງ ຫວຽດນາມ ທີ່ພວມຮຽນຢູ່ວິທະຍາໄລພາສາຕ່າງປະເທດກວາງຊີ ກ່າວວ່າ: ພວກເຮົາ ໄກບ້ານເກີດຂອງຕົນ ແລະ ຄອບຄົວຂອງຕົນຫຼາຍ, ແຕ່ຄວາມຮັກແພງຂອງ ໝູ່ເພື່ອນ, ຄູອາຈານ ແລະ ໂຮງຮຽນ ເຮັດໃຫ້ພວກເຮົາຮູ້ສຶກມີຄວາມອົບອຸ່ນຫຼາຍ, ປານໄດ້ກັບເມືອບ້ານເກີດ ແລະ ສະຫຼອງບຸນກັບຄອບຄົວ. ນາງ ກ່າວຕື່ມອີກວ່າ: ໃນມື້ບຸນແຫ່ງຄວາມສາມັກຄີນີ້, ນາງ ໄດ້ຮັບຮູ້ເຖິງຄວາມຮັກແພງ ເໝືອນກັບຢູ່ນຳຄອບຄົວ.

ທ່ານ ກົງສຸນໃຫຍ່ ມຽນມາ ປະຈຳນະຄອນຄຸນໝິງ ກ່າວວ່າ: ຕາມທີ່ຂ້າພະເຈົ້າຮູ້, ບຸນໄຫວ້ພະຈັນ ມີຄວາມໝາຍສາມັກຄີ. ເໝືອນດັ່ງບຸນໄຕ້ໄຟຂອງມຽນມາ, ເປັນມື້ບຸນທີ່ສະມາຊິກໃນຄອບຄົວເຕົ້າໂຮມສາມັກຄີກັນ. ເນື່ອງໃນໂອກາດທີ່ບຸນໄຫວ້ພະຈັນໝູນວຽນມາເຖິງ, ທ່ານ ໄດ້ອວຍພອນໃຫ້ໝົດທຸກຄົນຈົ່ງມີຄວາມເບີກບານມ່ວນຊື່ນ ແລະ ເຕົ້າໂຮມສາມັກຄີກັບສະມາຊິກຄອບຄົວຂອງຕົນ. (ພາບໂດຍ: ສຳນັກຂ່າວສານຊິນຮວາ)

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)



ynzhanba@163.com
laos.yunnangateway.com

